ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
-----===== xxxx =====-----

ກະຊວງອຸດສາຫະກຳ ແລະການຄ້າ

ເລກທີ 2025 /ອຄ.ຄພນ.
ນະຄອນຫຼວງວຽງຈັນ, ວັນທີ 12 OCT 2010

# ລະບຽບ ວ່າດ້ວຍ
# ການຄຸ້ມຄອງຄັງແຮເຂົ້າແຊກແຊງລາຄາ ແລະດັດສົມຕະຫຼາດ

- ອີງຕາມ ດຳລັດ ສະບັບເລກທີ 188/ນຍ, ລົງວັນທີ 7/8/2006, ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງ ກະຊວງ ອຸດສາຫະກຳ ແລະການຄ້າ;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ, ວ່າດ້ວຍການສ້າງຕັ້ງຄັງແຮເຂົ້າແຫ່ງຊາດ, ສະບັບເລກທີ 96/ນຍ, ລົງວັນທີ 23/09/08
- ອີງຕາມ ແຈ້ງການຂອງຄະນະເລຂາທິການລັດຖະບານ, ສະບັບເລກທີ 1093/ຄລບ, ລົງວັນທີ 24/06/09.

ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະການຄ້າ ອອກລະບຽບ ດັ່ງນີ້:

## ໝວດທີ I
## ຫຼັກການທົ່ວໄປ

**ມາດຕາ 1. ຈຸດປະສົງ**

ລະບຽບການສະບັບນີ້ວາງອອກ ເພື່ອກຳນົດທີ່ຕັ້ງ, ພາລະໜ້າທີ່ ຂອງອົງການຄຸ້ມຄອງຂອງລັດ ກ່ຽວກັບຄັງແຮເຂົ້າເພື່ອແຊກແຊງລາຄາ ແລະດັດສົມຕະຫລາດ ພ້ອມນັ້ນກໍ່ໄດ້ກຳນົດພາລະໜ້າທີ່ ແລະພັນທະຂອງຫົວໜ່ວຍທຸລະກິດ ໃນການເຮັດໜ້າທີ່ເກັບຊື້ເຂົ້າເພື່ອແຊກແຊງລາຄາ ແລະດັດສົມຕະຫຼາດ, ແນໃສ່ສົ່ງເສີມການຜະລິດເຂົ້າ ໃນຂອບເຂດທົ່ວປະເທດໃຫ້ມີຄວາມເຂັ້ມແຂງ ແລະຂະຫຍາຍຕົວ ທັງທາງດ້ານປະລິມານ ແລະຄຸນນະພາບ, ຮັບປະກັນການສະໜອງຕະຫຼາດພາຍໃນໃຫ້ມີສະຖຽນນະພາບ ແລະມີຄວາມໝັ້ນຄົງ ກ້າວໄປເຖິງການຜະລິດເປັນສິນຄ້າ ເພື່ອສົ່ງອອກໃນອານາຄົດ.

**ມາດຕາ 2. ລະດັບຄາດໝາຍ**

ເພື່ອຮັບປະກັນໃຫ້ມີສະຖຽນລະພາບທາງດ້ານລາຄາ, ຄວາມໝັ້ນຄົງທາງດ້ານການສະໜອງ, ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ສັງຄົມ, ຫຼີກລ່ຽງສະພາບຂາດເຂົ້າກິນ ແລະການເກັງກຳໄລ ຊຶ່ງກໍ່ໃຫ້ເກີດຄວາມວຸ້ນວາຍໃນສັງຄົມ.

ຄັງແຮເຂົ້າດັ່ງກ່າວ ຕ້ອງເຮັດໜ້າທີ່ຊຸກຍູ້ສົ່ງເສີມ ແລະພັດທະນາການຜະລິດ, ການເກັບຊື້, ການເກັບຮັກສາ, ການປຸງແຕ່ງ ແລະການຈຳໜ່າຍ ຕະຫລອດເຖິງການແຊກແຊງລາຄາ ແລະດັດສົມຕະຫລາດ ໃນກໍລະນີມີເຫດການສຸກເສີນ, ເກີດວິກິດການຂາດແຄນສະບຽງອາຫານ, ລາຄາເຂົ້າຢູ່ພາຍໃນ ຫຼືຢູ່ໃນຕະຫລາດໂລກມີການເໜັງຕີງຜິດປົກກະຕິ.

## ໝວດທີ II
## ອົງການຄຸ້ມຄອງ ແລະການຈັດຕັ້ງປະຕິບັດ ຄັງແຮເຂົ້າ ເພື່ອແຊກແຊງລາຄາ ແລະດັດສົມຕະຫຼາດ.

**ມາດຕາ 3.** **ອົງການຄຸ້ມຄອງຄັງແຮເຂົ້າເພື່ອແຊກແຊກລາຄາ ແລະດັດສົມຕະຫຼາດ**

ເພື່ອເຮັດໃຫ້ການຄຸ້ມຄອງຄັງແຮເຂົ້າເພື່ອແຊກແຊກລາຄາ ແລະດັດສົມຕະຫຼາດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນນັ້ນ, ກະຊວງ ອຸດສາຫະກຳ ແລະການຄ້າ ອະນຸຍາດໃຫ້ມີການຄຸ້ມຄອງຄັງແຮເຂົ້າເພື່ອແຊກແຊກລາຄາ ແລະດັດສົມຕະຫຼາດຢ່າງລວມສູນ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມການຄ້າພາຍໃນ ເປັນຜູ້ຈັດຕັ້ງປະຕິບັດ ແລະເປັນໃຈກາງໃນການປະສານ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານດັ່ງກ່າວ.

**ອົງການຄຸ້ມຄອງຄັງແຮເຂົ້າເພື່ອແຊກແຊກລາຄາ ແລະດັດສົມຕະຫຼາດ ປະກອບດ້ວຍ:**

1- ກົມການຄ້າພາຍໃນ;

2- ພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ;

**ມາດຕາ 4.** **ສິດ ແລະໜ້າທີ່ຂອງກົມການຄ້າພາຍໃນ.**

ໃນການຄຸ້ມຄອງວຽກງານຄັງແຮເຂົ້າເພື່ອແຊກແຊກລາຄາ ແລະດັດສົມຕະຫຼາດ ກົມການຄ້າພາຍໃນ ມີສິດ ແລະໜ້າທີ່ ດັ່ງນີ້:

1. ເປັນກອງເລຂາໃຫ້ແກ່ວຽກງານດັ່ງກ່າວ, ທັງເປັນຈຸດໃຈກາງໃນການປະສານງານ ກ່ຽວກັບວຽກງານຄັງແຮເຂົ້າເພື່ອແຊກແຊງລາຄາ ແລະດັດສົມຕະຫຼາດ.
2. ນຳເອົາທິດທາງນະໂຍບາຍຂອງພັກ-ລັດ ທີ່ວາງອອກໃນແຕ່ລະໄລຍະ ມາຜັນຂະຫຍາຍໃສ່ວຽກງານການຄຸ້ມຄອງຄັງແຮເຂົ້າ ເພື່ອແຊກແຊງລາຄາ ແລະດັດສົມຕະຫຼາດໃຫ້ມີປະສິດທິຜົນ.
3. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຈັດກອງປະຊຸມປຶກສາຫາລື, ຄົ້ນຄວ້າສ້າງນະໂຍບາຍ, ລະບຽບການຄຸ້ມຄອງ, ແລະແຜນການເກັບຊື້, ການເກັບຮັກສາ ແລະການຈຳໜ່າຍ ຕະຫຼອດເຖິງການສະໜອງເຂົ້າໃຫ້ເປົ້າໝາຍຕ່າງໆ ໃຫ້ໄດ້ຮັບຜົນດີ;
4. ສະເໜີຂໍທຶດຊີ້ນຳຈາກລັດຖະບານ ກໍຄືຈາກກະຊວງ, ກ່ຽວກັບການວາງນະໂຍບາຍ ແລະແຜນການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບຄັງແຮເຂົ້າເພື່ອແຊກແຊງລາຄາ ແລະດັດສົມຕະຫຼາດ ໃນແຕ່ລະໄລຍະ;

5. ສົມທົບກັບ ພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ເພື່ອດຳເນີນການກວດກາ, ເລືອກເຟັ້ນ ແລະພິຈາລະນາ ກຳນົດເອົາບັນດາລັດວິສາຫະກິດສະບຽງອາຫານ ແລະບັນດາຫົວໜ່ວຍທຸລະກິດເອກະຊົນທີ່ມີເງື່ອນໄຂ ເພື່ອສ້າງຄັງແຮເຂົ້າ ;
6. ສະເໜີລັດຖະບານ ກໍຄືກະຊວງ ເພື່ອຄັດຈ້ອນເອົາຫົວໜ່ວຍທຸລະກິດ ທີ່ຈັດຕັ້ງປະຕິບັດບໍ່ມີປະສິດທິຜົນ, ບໍ່ມີຄວາມຈິງໃຈ, ບໍ່ໃຫ້ຄວາມຮ່ວມມືທີ່ດີ ແລະສ້າງຄວາມຫຍຸ້ງຍາກໃຫ້ແກ່ລັດ ອອກຈາກຫົວໜ່ວຍທຸລະກິດທີ່ເຮັດຄັງແຮເຂົ້າດັ່ງກ່າວ.
7. ຊີ້ນຳການເກັບຊື້ ແລະສະສົມເຂົ້າຄັງແຮໃຫ້ໄດ້ຕາມຈຳນວນທີ່ລັດຖະບານໄດ້ກຳນົດໃຫ້ໃນແຕ່ລະໄລຍະ ແລະບົນພື້ນຖານແຜນດູນດ່ຽງເຂົ້າກິນປະຈຳປີຂອງແຕ່ລະແຂວງ ເພື່ອສ້າງເປັນຄັງແຮເຂົ້າແຊກແຊງລາຄາ ແລະດັດສົມຕະຫຼາດ;
8. ຄົ້ນຄວ້າ, ຖອດຖອນບົດຮຽນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານເປັນປະຈຳ, ເພື່ອຊີ້ນຳໃຫ້ພະແນກ ອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ຕິດຕາມ, ກວດກາ ແລະ ຄຸ້ມຄອງຄັງແຮເຂົ້າດັ່ງກ່າວຢູ່ພາຍໃນແຂວງຂອງຕົນ ໃຫ້ມີປະສິດທິຜົນ.
9. ກຳນົດລາຄາຂາຍຍົກ-ຂາຍຍ່ອຍ ເຂົ້າແຮແຊກແຊງລາຄາ ແລະດັດສົມຕະຫຼາດໃນແຕ່ລະໄລຍະໃຫ້ສອດຄ່ອງ, ບົນພື້ນຖານຂໍ້ມູນ ແລະສະພາບຄວາມເປັນຈິງຂອງລາຄາເຂົ້າໃນແຕ່ລະໄລຍະ ຢູ່ແຕ່ລະທ້ອງຖິ່ນ ໃຫເໝາະສົມ.
10. ອອກແຈ້ງການ ແນະນຳໃຫ້ພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ແລະບັນດາຫົວໜ່ວຍທຸລະກິດທີ່ເຮັດຄັງແຮ ສ້າງໂຄງປະກອບລາຄາເຂົ້າ (ລາຄາຕົ້ນທຶນການຜະລິດ, ລາຄາຕົ້ນທຶນເກັບຊື້, ລາຄາຂາຍຍົກ ແລະລາຄາຂາຍຍ່ອຍ) ໃນແຕ່ລະໄລຍະ ເພື່ອເປັນບ່ອນອີງໃຫ້ແກ່ການກຳນົດລາຄາ ແລະກຳນົດຕົວເລກຜິດດ່ຽງ ທີ່ຫົວໜ່ວຍທຸລະກິດ ຈະຕ້ອງໄດ້ໄລ່ລຽງສົ່ງຄືນໃຫ້ລັດ ຫຼືລັດຈະໄດ້ຖົມຊຸມໃຫ້ ລະຫວ່າງລາຄາທີ່ ໄດ້ໄລ່ລຽງຄ່າຕ່າງໆຂອງສ່ວນປະກອບ ລວມທັງກຳໄລໃສ່ແລ້ວ ແລະລາຄາທີ່ລັດກຳນົດໃຫ້ຂາຍແຊກແຊງ;
11. ສະຫຼຸບ, ລາຍງານ ແລະສະເໜີກ່ຽວກັບການຈັດຕັ້ງປະຕິບັດຂອງຕົນຕາມສິດ ແລະໜ້າທີ່ ທີ່ຖືກມອບໝາຍ ຕໍ່ກະຊວງອຸດສາຫະກຳ ແລະການຄ້າ ກໍຄືຕໍ່ລັດຖະບານ;
12. ສະເໜີລັດຖະບານ ເພື່ອໃຫ້ການຊຸກຍູ້ ສົ່ງເສີມ ແລະຍ້ອງຍໍ ຕໍ່ຂະແໜງການ, ບຸກຄົນ ແລະຫົວໜ່ວຍທຸລະກິດ ທີ່ມີຜົນງານດີ; ກົງກັນຂ້າມ ຕໍ່ກໍລະນີຜູ້ລະເມີດລະບຽບການສະບັບນີ້ ກໍຕ້ອງໄດ້ສະເໜີ ເພື່ອນຳໃຊ້ມາດຕະການທີ່ເໝາະສົມ ຕາມແຕ່ລະກໍລະນີຢ່າງເຂັ້ມງວດ.

ມາດຕາ 5. ສິດ ແລະໜ້າທີ່ຂອງພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ໃນການຄຸ້ມຄອງວຽກງານຄັງແຮເຂົ້າແຊກແຊງລາຄາ ແລະດັດສົມຕະຫຼາດ ພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ມີສິດ ແລະໜ້າທີ່ດັ່ງນີ້:

1. ເປັນເຈົ້າການໃນການຜັນຂະຫຍາຍ ທິດທາງນະໂຍບາຍ ແລະນະຕິດຳສັ່ງຕ່າງໆ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄັງແຮເຂົ້າ ທີ່ຂັ້ນເທິງວາງອອກໃນແຕ່ລະໄລຍະໃຫ້ມີປະສິດທິຜົນສູງ.

2. ສົມທົບກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ ເປັນຕົ້ນແມ່ນ ຂະແໜງການເງິນ, ທະນາຄານ ແລະຂະແໜງອື່ນທີ່ເຫັນວ່າຈຳເປັນ ເພື່ອແລກປ່ຽນຂໍ້ມູນ ແລະຂໍຄວາມຮ່ວມມື ໃນການຈັດຕັ້ງປະຕິບັດວຽກຄັງແຮເຂົ້າ ຢູ່ພາຍໃນແຂວງ, ນະຄອນຫຼວງ.
3. ກວດກາ, ເລືອກເຟັ້ນ ແລະກຳນົດ ເອົາລັດວິສາຫະກິດສະບຽງອາຫານແຂວງ(ຖ້າມີ) ແລະບັນດາຫົວໜ່ວຍທຸລະກິດເອກະຊົນທີ່ມີເງື່ອນໄຂ ເພື່ອສ້າງຄັງແຮເຂົ້າຂອງແຂວງ ແລະນະຄອນຫຼວງ ແລ້ວຍື່ນສະເໜີຕໍ່ກະຊວງ ອຸດສາຫະກຳ ແລະການຄ້າ ເພື່ອພິຈາລະນາຮັບຮອງເອົາ;
4. ຊີ້ນຳ, ນຳພາ, ຕິດຕາມ ແລະກວດກາ ຫົວໜ່ວຍທຸລະກິດທີ່ເຮັດຄັງແຮເຂົ້າ ຢູ່ພາຍໃນແຂວງ, ນະຄອນຫຼວງ ຕາມສິດ ແລະໜ້າທີ່ຂອງຕົນຢ່າງໃກ້ຊິດ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຄັງແຮເຂົ້າມີປະສິດທິຜົນ.
5. ອອກລະບຽບ ໃນການຄຸ້ມຄອງ, ການເກັບຊື້ ແລະການຈຳໜ່າຍເຂົ້າຢູ່ພາຍໃນແຂວງຂອງຕົນຢ່າງເຂັ້ມງວດ; ພ້ອມທັງໃຫ້ຄວາມສະດວກໃນການເກັບຊື້ເຂົ້າແຮແຊກແຊງລາຄາຂອງລັດ ຕໍ່ຫົວໜ່ວຍທຸລະກິດທີ່ເຮັດຄັງແຮຢູ່ພາຍໃນແຂວງ ເພື່ອຮັບປະກັນ ໃນການເກັບຊື້ເຂົ້າໄດ້ຕາມແຜນການ.
6. ສະຫຼຸບ, ລາຍງານ ແລະສະເໜີ ຂໍ້ທີ່ດກ່ຽວກັບການຈັດຕັ້ງປະຕິບັດຕາມສິດ ແລະໜ້າທີ່ຂອງຕົນຕໍ່ອຳນາດການປົກຄອງແຂວງ, ນະຄອນຫຼວງ ແລະກະຊວງອຸດສາຫະກຳ ແລະການຄ້າ ກ່ຽວກັບການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;
7. ປະຕິບັດຕາມຄຳສັ່ງ, ແຈ້ງການ ຫຼືຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະການຄ້າ ກ່ຽວກັບວຽກງານຄັງແຮເຂົ້າດັ່ງກ່າວໃນແຕ່ລະໄລຍະ.
8. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 6. ການຈັດຕັ້ງປະຕິບັດຄັງແຮເຂົ້າ ເພື່ອແຊກແຊງລາຄາ ແລະດັດສົມຕະຫຼາດ.**

ການຈັດຕັ້ງປະຕິບັດຄັງແຮເຂົ້າ ເພື່ອແຊກແຊງລາຄາ ແລະດັດສົມຕະຫຼາດ ແມ່ນທຸກຫົວໜ່ວຍທຸລະກິດ ທີ່ເຮັດຄັງແຮເຂົ້າ ຊຶ່ງປະກອບດ້ວຍ: ລັດວິສາຫະກິດສະບຽງອາຫານ ແລະຫົວໜ່ວຍທຸລະກິດໂຮງສີເຂົ້າອື່ນໆ ທີ່ຖືກຄັດເລືອກໃຫ້ປະຕິບັດວຽກງານດັ່ງກ່າວ.

ຫົວໜ່ວຍທຸລະກິດ ທີ່ເຮັດຄັງແຮເຂົ້າ ຕ້ອງມີມາດຖານ ແລະເງື່ອນໄຂ ດັ່ງນີ້:

1. ໂຮງສີເຂົ້າທັນສະໄໝ (ປະເພດ I); ຫຼືໂຮງສີເຂົ້າປະເພດ II; (ອີງຕາມມາດຖານຂອງກົມອຸດສາຫະກຳວາງອອກ).
2. ສາງ;
3. ເຕົາອົບ/ໂຮງອົບ;
4. ລານຕາກ;
5. ມີປະສົບການ ແລະມີການບໍລິຫານຈັດການກ່ຽວກັບໂຮງສີເຂົ້າ ແລະການເກັບຊື້ເຂົ້າຢ່າງນ້ອຍ 5 ປີ ຂຶ້ນໄປ;
6. ມີໃບທະບຽນວິສາຫະກິດ ແລະໃບທະບຽນອາກອນ;

7. ຖືບັນຊີ ຕາມກົດໝາຍບັນຊີ.
8. - ຕ້ອງເປັນສະມາຊິກສະມາຄົມ ຫຼືສະມາຊິກກຸ່ມໂຮງສີເຂົ້າ.

ມາດຕາ 7. ສິດ ແລະໜ້າທີ່ຂອງຫົວໜ່ວຍທຸລະກິດ ທີ່ເຮັດຄັງແຮເຂົ້າ

ຫົວໜ່ວຍທຸລະກິດທີ່ເຮັດຄັງແຮເຂົ້າ ມີສິດ ແລະໜ້າທີ່ ດັ່ງນີ້ :

1. ຊຸກຍູ້ ແລະ ສົ່ງເສີມການຜະລິດເຂົ້າ ຕັ້ງແຕ່ການປັບປຸງ ແລະຄັດເລືອກແນວພັນຂຶ້ນໄປ ເພື່ອຮັບປະກັນ ໃຫ້ໄດ້ເຂົ້າແຮທີ່ມີທັງຄຸນນະພາບ ແລະປະສິດທິພາບສູງ, ດ້ວຍການເຮັດສັນຍາຜູກພັນສອງສົ້ນກັບກຸ່ມຊາວນາ ພ້ອມທັງຄໍ້າປະກັນລາຄາເກັບຊື້ ເພື່ອປົກປ້ອງຜົນປະໂຫຍດຂອງຊາວນາບໍ່ໃຫ້ຖືກເອົາລັດເອົາປຽບຈາກນີກາງ;
2. ຄົ້ນຄວ້າ, ຊອກຫາແຫຼ່ງເກັບຊື້ເຂົ້າໃຫ້ໄດ້ຕາມຈຳນວນທີ່ລັດມອບໝາຍຕົວເລກໃຫ້ໃນແຕ່ລະໄລຍະ;
3. ປະສານສົມທົບກັບພະແນກອຸດສາຫະກຳ ແລະການຄ້າ, ພະແນກກະສິກຳ ແລະປ່າໄມ້ແຂວງ, ນະຄອນຫຼວງ ແລະອຳນາດການປົກຄອງທີ່ກ່ຽວຂ້ອງຢູ່ທ້ອງຖິ່ນ ເພື່ອອຳນວຍຄວາມສະດວກໃນການເກັບຊື້ເຂົ້າແຮແຊກແຊງລາຄາ ແລະດັດສົມຕະຫຼາດໃຫ້ໄດ້ຄົບຕາມຈຳນວນຕົວເລກ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ໃນແຕ່ລະໄລຍະ ບົນພື້ນຖານແຜນດູນດ່ຽງເຂົ້າກິນປະຈຳປີ ແລະທ່າແຮງຂອງແຕ່ລະແຂວງເປັນຫຼັກ;
4. ປະສານ ສົມທົບ ກັບພະແນກ ອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫຼວງ ແລະຫ້ອງການອຸດສາຫະກຳ ແລະການຄ້າຂອງບັນດາເມືອງ ເພື່ອສະເໜີສ້າງຕັ້ງກຸ່ມຊາວຄ້າຂາຍເຂົ້າກິນຢູ່ໃນທ້ອງຕະຫຼາດ ເພື່ອຮັບປະກັນໃຫ້ແກ່ການຄຸ້ມຄອງລາຄາ, ການສະໜອງ ແລະຄວາມຕ້ອງການເຂົ້າກິນໃຫ້ແກ່ສັງຄົມໄດ້ຊັດເຈນ;
5. ດຳເນີນການເຄື່ອນໄຫວທຸລະກິດເປັນປົກກະຕິ ເພື່ອສ້າງລາຍຮັບໃຫ້ແກ່ທຸລະກິດ ແລະທັງໝູນວຽນຄ່ຽນຖ່າຍເຂົ້າຢູ່ໃນສາງເປັນປະຈຳ ເພື່ອຮັບໃຊ້ສັງຄົມ ໃນຈຳນວນ 20% ຂອງຈຳນວນທຶນເງິນກູ້ ຫຼືຈຳນວນເຂົ້າທີ່ໄດ້ຮັບອະນຸຍາດທັງໝົດ, ແຕ່ຕ້ອງຮັບປະກັນໃຫ້ມີເຂົ້າແຮໄວ້ຢູ່ໃນສາງບໍ່ໃຫ້ຫຼຸດ 80% ຂອງຈຳນວນທຶນເງິນກູ້ ຫຼືຈຳນວນເຂົ້າທີ່ໄດ້ຮັບອະນຸຍາດທັງໝົດ;
6. ເຂົ້າທີ່ໝູນວຽນຄ່ຽນຖ່າຍປົກກະຕິ ແມ່ນໃຫ້ຢູ່ໃນອັດຕາສ່ວນ 20% ຂອງຈຳນວນເຂົ້າແຮທັງໝົດ ທີ່ລະບຸໄວ້ໃນສັນຍາ ; ການປະຕິບັດດັ່ງກ່າວຕ້ອງເຮັດເປັນລະບົບ ເພື່ອຮັບປະກັນບໍ່ໃຫ້ເຂົ້າເຊື່ອມຄຸນນະພາບ ແລະບົກແຫ້ງເກີນອັດຕາທີ່ກຳນົດ.
7. ແຈ້ງໂຄງສ້າງລາຄາຕົ້ນທຶນການຜະລິດ ຫຼື ຕົ້ນທຶນເກັບຊື້ເຂົ້າຕາມລະດູການ ໃຫ້ກະຊວງອຸດສາຫະກຳ ແລະການຄ້າ (ກົມການຄ້າພາຍໃນ) ຊາບທັນເວລາ ເພື່ອຈະໄດ້ກຳນົດລາຄາຂາຍທີ່ເໝາະສົມ, ພ້ອມທັງປະຕິບັດລາຄາ ທີ່ລັດຖະບານໄດ້ກຳນົດໃຫ້ໃນແຕ່ລະໄລຍະຢ່າງເຂັ້ມງວດ.

8. ປະຕິບັດສັນຍາຕ່າງໆທີ່ຕົກລົງນາໃວ້ ແລະປະຕິບັດລະບຽບການອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

## ໝວດທີ III
## ພັນທະຂອງຫົວໜ່ວຍທຸລະກິດ

**ມາດຕາ 8. ພັນທະຂອງຫົວໜ່ວຍທຸລະກິດ**

ຫົວໜ່ວຍທຸລະກິດທີ່ ຖືກມອບໝາຍໃຫ້ສ້າງສັງແຮເຂົ້າ ມີພັນທະຕໍ່ລັດດັ່ງນີ້:

1. ຂຶ້ນແຜນການເຄື່ອນໄຫວຂອງຕົນ ຜ່ານພະແນກອຸດສາຫະກໍາ ແລະການຄ້າແຂວງ, ນະຄອນຫຼວງ, ແລ້ວສະເໜີຕໍ່ກອງເລຂາ (ກົມການຄ້າພາຍໃນ) ທີ່ຮັບຜິດຊອບວຽກດັ່ງກ່າວ ເປັນແຕ່ລະເດືອນ, ງວດ ແລະ ປີ;
2. ແຈ້ງລາຄາຕົ້ນທຶນການຜະລິດ, ລາຄາເກັບຊື້, ລາຄາຂາຍຍົກ ແລະລາຄາຂາຍຍ່ອຍ ຕໍ່ກອງເລຂາຮັບຜິດຊອບວຽກງານດັ່ງກ່າວ(ກົມການຄ້າພາຍໃນ) ໂດຍຜ່ານພະແນກອຸດສາຫະກໍາ ແລະການແຂວງ, ນະຄອນຫຼວງ ເປັນແຕ່ລະງວດ ຫຼືປີ ເພື່ອຕິດຕາມ ແລະກໍານົດລາຄາຂາຍໃຫ້ເໝາະສົມ ແລະທັນກັບເວລາໃນຍາມຈໍາເປັນ;
3. ເວລາຈໍາໜ່າຍ ເພື່ອແຊກແຊງລາຄາ ຕ້ອງປະຕິບັດຕາມທິດຊີ້ນໍາ ແລະຕາມກົນໄກລາຄາ ທີ່ລັດຖະບານໄດ້ອະນຸມັດໃນແຕ່ລະໄລຍະຢ່າງເຄັ່ງຄັດ ບໍ່ວ່າລາຄາຂາຍຍົກ ກໍຄືລາຄາຂາຍຍ່ອຍ;
4. ຕ້ອງຮັບຜິດຊອບຕໍ່ການຊໍາລະສະສາງ ຕາມລະບຽບການຂອງທະນາຄານ ແຫ່ງ ສປປ ລາວວາງອອກ ທັງຕົ້ນທຶນ ແລະດອກເບັ້ຍ ຕາມຈໍານວນ ແລະຕາມກໍານົດເວລາທີ່ຕົກໄດ້ເຊັນສັນຍາໄວ້ກັບ ອົງການຄຸ້ມຄອງຂອງລັດ;
5. ຕ້ອງຮັບຜິດຊອບພັນທະຂອງຕົນຕໍ່ລັດ ຕາມລະບຽບການຂອງກະຊວງການເງິນວາງອອກ ໃນກໍລະນີທີ່ມີການເຄື່ອນໄຫວທຸລະກິດປົກກະຕິ. ກົງກັນຂ້າມ, ໃນກໍລະນີ ທີ່ຕ້ອງໄດ້ປະຕິບັດຕາມການຊີ້ນໍາຂອງລັດຖະບານ ໃນການແຊກແຊງລາຄາ ແລະດັດສົມຕະຫຼາດແບບສຸກເສີນ ຈະໄດ້ຮັບການຍົກເວັ້ນໃດໜຶ່ງ (ຕາມຕົວເລກທີ່ລັດຖະບານກໍານົດໃຫ້) ຫຼືຈະຕ້ອງໄດ້ໄລ່ລຽງສົ່ງຄືນໃຫ້ລັດ ໃນກໍລະນີທີ່ເໝາະສົມ;
   - ສົມທົບກັບກອງເລຂາສັງແຮເຂົ້າຂອງລັດ ເພື່ອໄລ່ລຽງສ່ວນຜິດດ່ຽງທີ່ມຊຸມໃຫ້ ໃນກໍລະນີທີ່ຕົວເລກກໍານົດໃຫ້ຂາຍແຊກແຊງ ຫາກຕໍ່າກວ່າລາຄາຕົວຈິງທີ່ລັດກໍານົດ.
6. ຕ້ອງປະຕິບັດລະບຽບການລາຍງານ ກ່ຽວກັບການເຄື່ອນໄຫວຂອງຕົນ ພ້ອມທັງສະຫຼຸບຕົວເລກຂອງການເຄື່ອນໄຫວດັ່ງກ່າວ ຕໍ່ພະແນກອຸດສາຫະກໍາ ແລະການຄ້າແຂວງ, ນະຄອນຫຼວງ ແລະຕໍ່ກອງເລຂາສັງແຮເຂົ້າຂອງລັດ (ກົມການຄ້າພາຍໃນ) ເປັນປົກກະຕິ;

7. ໃຫ້ຄວາມຮ່ວມມື ແລະອຳນວຍຄວາມສະດວກ ແກ່ອົງການຄຸ້ມຄອງຂອງລັດ ເມື່ອມີການດຳເນີນການກວດກາ ໃນການຈັດຕັ້ງປະຕິບັດດັ່ງກ່າວ.

## ໝວດທີ IV
## ບັນດາຂໍ້ຫ້າມ

ມາດຕາ 9. ຫ້າມບຸກຄົນ, ນິຕິບຸກຄົນ ແລະອົງການຈັດຕັ້ງຂອງລັດ ສວຍໂອກາດນຳໃຊ້ໜ້າທີ່ ແລະສະພາບການ ເພື່ອສ້າງຄວາມປັ່ນປ່ວນ, ກົດໜ່ວງ, ແກ້ງແຍ້ງແຂ່ງຂັນກັນເຄື່ອນໄຫວ ຢ່າງບໍ່ເປັນທຳ, ຊຶ່ງເປັນສາເຫດເຮັດໃຫ້ວຽກງານ ການເກັບຊື້ເຂົ້າຊັກຊ້າ ແລະສ້າງຄວາມອັບປະໂຫຍດເປັນເຫດໃຫ້ສັງຄົມໄດ້ຮັບຄວາມເດືອດຮ້ອນ ເຊັ່ນ: ຜູກຂາດເຂດເກັບຊື້, ກັກຕູນ, ກົດໜ່ວງລາຄາ ຕະຫຼອດເຖິງການເຄື່ອນໄຫວຕ່າງໆທີ່ພົວພັນເຖິງການຕ້ານ ແລະສ້າງຄວາມຫຍຸ້ງຍາກ ໃຫ້ແກ່ວຽກງານຄັງແຮເຂົ້າ.

ມາດຕາ 10. ຫ້າມບໍ່ໃຫ້ເຂົ້າແຮແຊກແຊງລາຄາຂອງລັດຂາດສາງຕ່ຳກວ່າ 80% ຂອງຈຳນວນເຂົ້າທີ່ອະນຸມັດໃຫ້ໃນແຕ່ລະໄລຍະ ; ໃນກໍລະນີ ມີການໝູນວຽນຄ່ຽນຖ່າຍເຂົ້າໃນສະພາບປົກກະຕິ ຫ້າມບໍ່ໃຫ້ເຄື່ອນໄຫວເກີນ 20% ຂອງເຂົ້າແຮທັງໝົດທີ່ອະນຸມັດໃຫ້.

ມາດຕາ 11. ຫ້າມບໍ່ໃຫ້ຂາຍເຂົ້າເກີນລາຄາ ທີ່ລັດກຳນົດໃນແຕ່ລະໄລຍະຢ່າງເດັດຂາດ, ນັບທັງລາຄາຂາຍຍົກ ແລະຂາຍຍ່ອຍ ໃນກໍລະນີແຊກແຊງລາຄາ.

## ໝວດທີ V
## ການປະຕິບັດມາດຕະການ

ມາດຕາ 12. ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບສະບັບນີ້ ຖ້າປະຕິບັດຖືກຕ້ອງມີຜົນງານດີເດັ່ນ ຈະໄດ້ຮັບການຍ້ອງຍໍເປັນຜູ້ທີ່ດີເດັ່ນປະຈຳປີ ພ້ອມທັງຈະໄດ້ຮັບບູລິມະສິດໃນການສະໜັບ ສະໜູນ, ຊ່ວຍເຫຼືອຈາກລັດຖະບານ.

ມາດຕາ 13. ກົງກັນຂ້າມ ຖ້າຂະແໜງການ, ບຸກຄົນ ແລະຫົວໜ່ວຍທຸລະກິດໃດ ຫາກລະເມີດຝ່າຝືນຂໍ້ຫ້າມໃນລະບຽບສະບັບນີ້ ຈະຖືກລົງໂທດ, ປັບໃໝ, ປະຕິບັດວິໄນ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະຕາມມາດຕາ 147,148,149,150 ແລະຕາມໝວດທີ VIII ຫຼືມາດຕາອື່ນໆ ຕາມທີ່ລະບຸໄວ້ໃນກົດໝາຍອາຍາ ສະບັບປັບປຸງ (ເລກທີ 12/ສພຊ, ລົງວັນທີ 09 ພະຈິກ 2005).

ມາດຕາ 14. ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງຂອງລັດທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດລະບຽບສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 15. ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະປ່ຽນແທນລະບຽບການ ສະບັບເລກທີ 1760/ອຄ.ຄພນ. ລົງວັນທີ 03 ເດືອນ ກັນຍາ 2009.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະການຄ້າ,

ດຣ. ນາມ ວິຍະເກດ